ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 2000 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 19.09.2022

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ແລະ ທຽບເທົ່າສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້.
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ສະເໜີຄັດເລືອກພະນັກງານເຂົ້າຮ່ວມສະໝັກທຶນການສຶກສາ ຂອງໂຄງການທຶນການສຶກສາເພື່ອພັດທະນາຊັບພະຍາກອນມະນຸດ ໂດຍທຶນຊ່ວຍເຫຼືອລ້າ ຂອງລັດຖະບານຍີ່ປຸ່ນ ປີ **2022 (The Project for Human Resources Development Scholarship by Japanese Grant Aid - JDS 2022).**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ແຈ້ງການຂອງ ກົມຮ່ວມມືຕ່າງປະເທດ, ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1765/ຮມ, ລົງວັນທີ 30 ສິງຫາ 2021;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາພະນັກງານ-ລັດຖະກອນຜູ້ທີ່ມີເງື່ອນໄຂເໝາະສົມເຂົ້າຮ່ວມສະໝັກທຶນການສຶກສາຂອງໂຄງການທຶນການສຶກສາເພື່ອພັດທະນາຊັບພະຍາກອນມະນຸດ ໂດຍທຶນຊ່ວຍເຫຼືອລ້າຂອງລັດຖະບານຍີ່ປຸ່ນ (The Project for Human Resources Development Scholarship by Japanese Grant Aid - JDS 2022) ໃນລະດັບປະລິນຍາໂທ ແລະ ປະລິນຍາເອກ, ສົກປີ 2023-2024 (ສຳລັບຜູ້ທີ່ຈະສະໝັກທຶນໃນລະດັບປະລິນຍາເອກ ແມ່ນສະເພາະຜູ້ທີ່ຮຽນຈົບລະດັບປະລິນຍາໂທຂອງ ທຶນ JDS ເທົ່ານັ້ນ) ຊຶ່ງມີລາຍລະອຽດດັ່ງນີ້:

**1. Kyushu University**

**ຂົງເຂດສາຂາວິຊາຮຽນ:** ການພັດທະນາຊົນນະບົດ ແລະ ກະສິກຳ (Agriculture and Rural Development), ລົງເລິກຄົ້ນຄວ້າຫົວຂໍ້:

1) ການພັດທະນາມູນຄ່າຕ່ອງໂສ້ອາຫານ (Development of Food Value Chain)
2) ການຄ້ຳປະກັນດ້ານອາຫານ (Food Security)
3) ເຕັກນິກການປູກຝັງ (Plant Techniques)
4) ການພັດທະນາອຸດສາຫະກຳທ້ອງຖິ່ນ (Development of Local Industry)

5) ການປັບປຸງການດຳລົງຊີວິດຂອງຄົນທ້ອງຖິ່ນ (Improvement of Livelihoods of Local Residents)
6) ການປັບປຸງສິ່ງອຳນວຍຄວາມສະດວກພື້ນຖານ ແລະ ສະພາບແວດລ້ອມການດຳລົງຊີວິດໃນຊົນນະບົດ ແລະ ຂົງເຂດວິຊາຮຽນອື່ນໆ (Improvement of Basic Facilities and Living Environment in Rural Inhabitants), etc.

**2. Tsukuba University**

ຂົງເຂດວິຊາຮຽນ: ການອະນຸລັກຊັບພະຍາກອນທຳມະຊາດ ແລະ ການຫຼຸດຜ່ອນຄວາມສ່ຽງຂອງໄພທຳມະຊາດ (Natural Environment Conservation and Disaster Risk Reduction), ລົງເລິກຄົ້ນຄວ້າຫົວຂໍ້:

1) ການປົກປັກຮັກສາປ່າໄມ້ (Forest Preservation)
2) ການອະນຸລັກ ແລະ ການນຳໃຊ້ຊັບພະຍາກອນນ້ຳໃຫ້ເກີດປະໂຫຍດສູງສຸດ (Effective Usage and Conservation of Water Resources)
3) ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (Environmental Impact Assessment)
4) ປ່າສະຫງວນທາງທຳມະຊາດ (Natural Protect Area)
5) ການຈ່າຍຄ່າຕອບແທນການບໍລິການທາງລະບົບນິເວດ (Payment for Ecosystem (Environmental) Services
6) ການຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ຂົງເຂດວິຊາຮຽນອື່ນໆ (Disaster Risk Reduction), etc.

<u>ເງື່ອນໄຂ ແລະ ວິທີການສະໝັກ:</u>

- ໃຫ້ຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເໝາະສົມປະກອບແບບຟອມ ແລ້ວສົ່ງໃຫ້ ຫ້ອງການອົງການ JICE JDS ໂດຍກົງ, ສຳລັບ Official Nomination Letter ແມ່ນໃຫ້ສະເໜີເຖິງກົມຈັດຕັ້ງ ແລະ ພະນັກງານ ເພື່ອເຊັນຢັ້ງຢືນ.

(ກຳນົດສົ່ງເອກະສານສະໝັກເຖິງ ຫ້ອງການອົງການ JICE JDS ວັນທີ **18 ພະຈິກ 2022)**

❖ <u>ລະດັບປະລິນຍາໂທ</u>

- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາຕີ ຂຶ້ນໄປ ທັງພາຍໃນ ແລະ ຕ່າງປະເທດ
- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸລະຫວ່າງ 22 - 39 ປີ;
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ ທັງພາສາເວົ້າ ແລະ ຂຽນ, ຖ້າມີຄະແນນ TOEFL >= 500 ຈະເປັນການດີ, (ສຳລັບຜູ້ທີ່ຈະສະໝັກເອົາທຶນຂອງມະຫາວິທະຍາໄລ Tsukuba ແມ່ນໃຫ້ມີຄະແນນ TOEIC >= 520);
- ຜູ້ສະໝັກຕ້ອງບໍ່ໄດ້ຮັບທຶນການສຶກສາລະດັບປະລິນຍາໂທອື່ນ;
- ຜູ້ສະໝັກທີ່ເຄີຍສຶກສາຢູ່ຕ່າງປະເທດຫຼາຍກວ່າ 01 ປີ ແລະ ກັບຄືນມາ ສປປ ລາວ ບໍ່ຮອດ 02 ປີ ແມ່ນບໍ່ສາມາດສະໝັກໄດ້;

❖ <u>ລະດັບປະລິນຍາເອກ</u>

- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸບໍ່ເກີນ 45 ປີ ແລະ ໄດ້ເປັນນັກສຶກສາໄດ້ຮັບທຶນຂອງ JDS ມາແລ້ວ (ຈົບປະລິນຍາໂທ ຂອງທຶນ JDS);
- ຜູ້ສະໝັກຕ້ອງມີໜັງສືແນະນຳ "Recommendation Letter" ຈາກຜູ້ຊີ້ນຳຂອງກົມກອງທີ່ສັງກັດຢູ່;

- ຜູ້ສະໝັກຕ້ອງມີໜັງສືແນະນຳ “Recommendation Letter” ຈາກມະຫາວິທະຍາໄລ ທີ່ຜູ້ກ່ຽວຈະສະໝັກເຂົ້າຮຽນ ແລະ ຕ້ອງໄດ້ວາງແຜນໂຄງຮ່າງບົດວິທະຍານິພົນມານຳ;
- ຜູ້ສະໝັກຈະຕ້ອງຍັງບໍ່ໄດ້ຮຽນຈົບລະດັບປະລິນຍາເອກຈາກຕ່າງປະເທດໂດຍທຶນຊ່ວຍເຫຼືອຂອງລັດຖະບານໃດໆ;
- ຜູ້ສະໝັກແມ່ນບໍ່ໄດ້ຮັບທຶນ ຫຼື ມີແຜນຈະໄດ້ຮັບທຶນຈາກທຶນຊ່ວຍເຫຼືອອື່ນໆໃນໄລຍະທີ່ສະໝັກທຶນນີ້.

ໝາຍເຫດ:

1. ຫ້ອງການອົງການ JICE JDS ຈະໄດ້ຈັດສຳມະນາອະທິບາຍກ່ຽວກັບລາຍລະອຽດ ແລະ ວິທີການສະໝັກທຶນດັ່ງກ່າວຕາມຕາຕະລາງດັ່ງລຸ່ມນີ້:
   - ➢ ທີ່ແຂວງຫຼວງພະບາງ: ວັນທີ 22 ກັນຍາ 2022, ທີ່ ພະແນກສຶກສາທິການ ແລະ ກິລາແຂວງຫຼວງພະບາງ;
   - ➢ ທີ່ແຂວງສະຫວັນນະເຂດ: ວັນທີ 30 ກັນຍາ 2022, ທີ່ ພະແນກສຶກສາທິການ ແລະ ກິລາແຂວງສະຫວັນນະເຂດ;
   - ➢ ທີ່ ແຂວງຈຳປາສັກ: ວັນທີ 29 ກັນຍາ 2022, ທີ່ ສູນ ICT.
2. ອົງການ JICE JDS ຈະໄດ້ຈັດຝຶກອົບຮົມສຳລັບຜູ້ສະໝັກກ່ອນການສອບເສັງ ເພື່ອໃຫ້ຜູ້ສະໝັກທຶນໄດ້ພັດທະນາທັກສະກ່ອນການສອບເສັງ ຊຶ່ງມີລາຍລະອຽດດັ່ງນີ້:
   - ➢ ຝຶກອົບຮົມຄະນິດສາດ: ຈະຈັດຂຶ້ນໃນເດືອນພະຈິກ(ລາຍລະອຽດຈະແຈ້ງຕື່ມ);
   - ➢ ຝຶກອົບຮົມພາສາອັງກິດ: ວັນທີ 24 ຕຸລາ-23 ພະຈິກ 2022, ເວລາ 17:30-19:00 ໂມງ (ວັນຈັນ-ສຸກ), ທີ່ ວິທະຍາໄລ ວຽງຈັນ (Vientiane College) ສຳລັບຜູ້ເຂົ້າຮ່ວມຄອສພາສາອັງກິດ ກະລຸນາລົງທະບຽນ ເພື່ອສຳພາດ ແລະ ສອບເສັງຄັດເລືອກ ກ່ອນວັນທີ 03 ຕຸລາ 2022.

     ກະລຸນາຕິດຕາມລາຍລະອຽດ ແລະ ຂໍ້ມູນໄດ້ ໄດ້ທີ່ **https://www.facebook.com/jds.laos/** ແລະ ລາຍລະອຽດກ່ຽວກັບເງື່ອນໄຂຂອງທຶນ, ຂົງເຂດວິຊາຮຽນທີ່ສາມາດສະໜີ, ບັນດາມະຫາວິທະຍາໄລທີ່ກ່ຽວຂ້ອງ ແລະ ຂັ້ນຕອນການສະໝັກທຶນ ແມ່ນສາມາດດາວໂຫຼດໄດ້ທີ່ເວັບໄຊ **https://jds-scholarship.org/country/laos/ index.html** ຫຼື ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ,ກົມຈັດຕັ້ງ ແລະ ພະນັກງານ: ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ບຸນທະວີ ໄຊຍະເພັດ

**<u>ສຳເນົານຳສົ່ງ:</u>**

- ພະແນກ ຄພຊ 01 ສະບັບ
- ເກັບມ້ຽນ 01 ສະບັບ

ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 415368, 452455, E-mail: doapmaf@gmail.com;